ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ ທຫລ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຮອງຜູ້ວ່າການ ທຫລ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ປະທານ ສະມາຄົມ Kawasaki Rotaly Club

ໃນຕອນເຊົ້າຂອງວັນທີ 21 ມີນາ 2025 ທີ່ ຫ້ອງຮັບແຂກ ມິດຕະພາບ, ທະນາຄານແຫ່ງ ສປປ ລາວ (ທຫລ). ທ່ານ ສຸລິສັກ ທຳນຸວົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະກົມພາຍໃນ ທຫລ ທີ່ກ່ຽວຂ້ອງ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ KASAI KATSUHIKO, ປະທານສະມາຄົມ Kawasaki Rotaly Club ພ້ອມດ້ວຍຄະນະ ເນື່ອງໃນໂອກາດມາເຮັດວຽກ ແລະ ຢ້ຽມຢາມ ສປປ ລາວ ຄັ້ງນີ້ ເພື່ອລາຍງານການຈັດຕັ້ງປະຕິບັດໂຄງການຂອງສະມາຄົມດັ່ງກ່າວຢູ່ ສປປ ລາວ ທີ່ກຳລັງດຳເນີນການຈັດຕັ້ງປະຕິບັດໃນປີ 2025 ແລະ ທິດທາງແຜນການໃນຕໍ່ໜ້າ ແລະ ແລກປ່ຽນຄຳຄິດຄຳເຫັນດ້ານເສດຖະກິດ, ການເງິນ ແລະ ການຄ້າ ຢູ່ ສປປ ລາວ.

ທັງສອງຝ່າຍໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບສະພາບເສດຖະກິດ-ການເງິນ ແລະ ການຄ້າ-ການລົງທຶນ ຢູ່ ສປປ ລາວ. ໃນນັ້ນ, ທ່ານ ຮອງຜູ້ວ່າການ ທຫລ ຍັງໄດ້ເນັ້ນຍ້ຳເຖິງແຜນພັດທະນາຂະແໜງການເງິນ 05 ປີ ຂອງ ທຫລ ໂດຍສະເພາະແມ່ນລົງເລິກການເງິນສີຂຽວ (Green Finance). ພ້ອມນີ້ ຍັງໄດ້ປຶກສາຫາລື ກ່ຽວກັບການພັດທະນາຂະແໜງການສຶກສາ ຂອງ ທຫລ ຊຶ່ງສະຖາບັນການທະນາຄານເປັນຜູ້ຮັບຜິດຊອບ. ສະນັ້ນ, ສະເໜີ ມາຍັງ

ສະມາຄົມຊ່ວຍສະໜັບສະໜູນ ເພື່ອຍົກລະດັບການຮຽນການສອນຫຼາຍຂຶ້ນ ເພື່ອທຽບເທົ່າກັບການສຶກສາປະເທດຍີ່ປຸ່ນ ອີກດ້ວຍ.

ໃນໂອກາດນີ້, ທ່ານ ຮອງຜູ້ວ່າການ ທຫລ ໄດ້ກ່າວຂອບໃຈມາຍັງທ່ານ KASAI KATSUHIKO, ປະທານ ສະມາຄົມ Kawasaki Rotaly Club ພ້ອມດ້ວຍຄະນະ ພ້ອມທັງຫວັງວ່າສະມາຄົມດັ່ງກ່າວຈະໃຫ້ການຊ່ວຍເຫຼືອທາງ ດ້ານການວິຊາການ ແກ່ ທຫລ ໃນຕໍ່ໜ້າ.

**ພາບ: ຫ້ອງການ**
**ຂ່າວ: ກົມຮ່ວມມືສາກົນ**

ຢູ່ເມືອງລາວໃຊ້ເງິນກີບລາວ